BCEL One

LVI
ບໍລິສັດປະກັນໄພ ລາວ-ຫວຽດ
LAO-VIET INSURANCE COMPANY

# ແຈ້ງການ

ເພື່ອສ້າງຄວາມສະດວກໃຫ້ກັບລູກຄ້າ, LVI ໄດ້ເປີດໃຫ້ບໍລິການ ຊື້ ແລະ ຕໍ່ສັນຍາປະກັນໄພຜ່ານແອັບ BCEL One ສຳລັບ 02 ຜະລິດຕະພັນປະກັນໄພຄື: ປະກັນໄພຍານພາຫະນະ, ປະກັນໄພ ສຸຂະພາບ ແລະ ລູກຄ້າສາມາດຮັບໃບຢັ້ງຢືນປະກັນໄພເອເລັກໂທຣນິກທັນທີເພື່ອບັນທຶກໃນໂທລະສັບແທນໃບຢັ້ງຢືນປະກັນໄພທີ່ພິມດ້ວຍເຈ້ຍ A4 ທົ່ວໄປ. ດັ່ງນັ້ນ, LVI ຂໍຖືເປັນກຽດແຈ້ງມາຍັງລູກຄ້າເພື່ອຮັບຊາບດັ່ງນີ້:

1. ປະຈຸບັນ, LVI ແມ່ນບໍລິສັດທຳອິດ ແລະ ແຫ່ງດຽວໃນລາວ ທີ່ໄດ້ຮັບອະນຸມັດຈາກກະຊວງການເງິນນຳໃຊ້ໃບຢັ້ງຢືນປະກັນໄພເອເລັກໂທຣນິກ(ຕາມເອກະສານເລກທີ 0770/ຄລປ ລົງວັນທີ 30 ກໍລະກົດ2020)
2. ສຳລັບປະກັນໄພຍານພາຫະນະ: ກົມຈະລະຈອນ ກໍ່ໄດ້ມີແຈ້ງການສົ່ງເຖິງກຳລັງຕຳຫຼວດຈາລະຈອນໃນທົ່ວປະເທດຮັບຊາບ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຊົມໃຊ້ໃບຢັ້ງຢືນປະກັນໄພເອເລັກໂທຣນິກຂອງ ບໍລິສັດປະກັນໄພລາວ-ຫວຽດ (LVI). (ຕາມແຈ້ງການສະບັບເລກທີ 028/ກຈຈ, ລົງວັນທີ 11 ກັນຍາ 2020).
3. ສຳລັບປະກັນໄພສຸຂະພາບ: ບໍລິສັດ LVI ກໍ່ໄດ້ເຊັນສັນຍາຮ່ວມມື ກັບບັນດາໂຮງໝໍໃນທົ່ວປະເທດເພື່ອຄ້ຳປະກັນສຳລັບລາຍຈ່າຍໃນການປິ່ນປົວຕ່າງໆ.
4. ໃນເວລາສັນຈອນ ຫຼື ໄປປິ່ນປົວພະຍາດ, ລູກຄ້າ ສາມາດນຳໃບຢັ້ງຢືນການປະກັນໄພເອເລັກໂທຣນິກທີ່ມີ QR Code ໃຫ້ເຈົ້າໜ້າທີ່ ຫຼື ໂຮງໝໍ ສະແກນເພື່ອກວດກາ.

**ຂັ້ນຕອນໃນການຊື້ ແລະ ຕໍ່ສັນຍາປະກັນໄພ**
**ຜ່ານແອັບ BCEL One:**

1. ລົງຊື່ເຂົ້າແອັບ: BCEL One
2. ເລືອກຈ່າຍຄ່າປະກັນໄພ LVI
3. ເລືອກຜະລິດຕະພັນປະກັນໄພ
4. ຊຳລະ. ພາຍຫຼັງຊຳລະສຳເລັດ, ລູກຄ້າຈະໄດ້ຮັບໃບຢັ້ງຢືນປະກັນໄພເອເລັກໂທຣນິກ 01 ສະບັບເພື່ອບັນທຶກໃນໂທລະສັບ ແລະ ສາມາດນຳໃຊ້ໄດ້ທັນທີ.
   ຂໍສະແດງຄວາມຂອບໃຈ!

ທຽນ ທອງດ ຊ່າຍ
ຜູ້ອຳນວຍການໃຫຍ່

1465 - 020 78916656 | www.laovietinsurance.com